ຂ່າວພາຍໃນ
*Internal Newsletter*
ມິດຕະພາບ ລາວ - ຍີ່ປຸ່ນ
*Friendship for Laos and Japan*
No. 15- Dec 2014

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ກົມເຄຫາ ແລະ ຜັງເມືອງ
ໂຄງການ ພັດທະນາ ຄວາມອາດສາມາດ
ດ້ານການຄຸ້ມຄອງ ໃຫ້ແກ່ຂະແໜງນ້ຳປະປາ
The Capacity Development Project for Improvement of Management Ability of Water Supply Authorities

# Project MaWaSU 2nd International Seminar and 4th Project to Project (P2P) Meeting held




Project MaWaSU 2nd International Seminar was held on 20 November 2014 with about 200 participants including representatives of Ministry of Health, Labour and Welfare, Saitama City Waterworks Bureau, Water works Bureau, City of Kawasaki, other MaWaSU supporting organizations, overseas guests, etc. Contents of the seminar were mainly project activities for 2 years, more detailed than the previous year that was only introduction of the project. The 4th P2P Meeting was held on 21 November 2014. Limiting the participants to about 50 people, the meeting provided an opportunity to have an intensive discussion on "Creating a culture to drink tap water in your country."

## Project MAWASU 2nd International Seminar

In the MaWaSU project period (2012-2017), an International Seminar is held once a year. The 2nd International Seminar was held on 20 November 2014 at Lao Plaza Hotel in Vientiane Capital. Representatives of Ministry of Health, Labour and Welfare, Saitama City Waterworks Bureau, Water works Bureau, City of Kawasaki, JICA Headquarters from Japan attended the seminar, while management class of Ministry of Public Works and Transport (Organizer), Provincial Department of Public Works and Transport and Water Supply State Enterprise from all the provinces participated as representatives of the Lao side. Representatives from the neighboring countries such as Cambodia, Indonesia, Myanmar, Thailand and Vietnam also joined the seminar totalling 200 participants.



Purpose of Project MaWaSU International Seminar is to share MaWaSU activities with related parties in water supply sector inside and outside countries to exchange information and opinions. This 2nd International Seminar provided an opportunity for MaWaSU members to present project activities and achievements for 2 years different from the previous year that provided only project general information. Especially, the 3 pilot WSSEs preferred to make an appeal of respective efforts in Project MaWaSU. At the end, they agreed to divide reports for the seminar participants to understand the MaWaSU activities in total.

**CONTINUED ON PAGE 2**

### The Capacity Development Project for Improvement of Management Ability of Water Supply Authorities (Project MaWaSU)

Laos sets its target to provide 24-hour access to safe water for the 80% of urban population by 2020, according to the Prime Minister Decision in 1999. While development partners including JICA have provided various supports, water supply coverage in urban areas in 2010 remained 55%. To achieve the target, it is necessary to further develop and expand water supply facility and secure investment budget through efficient waterworks management. For efficient waterworks management, short-term planning and monitoring framework have been set up so far. However, many WSSEs are unable to make a short-term plan and renew it by itself, resulting in less effective framework. Planning procedure based on mid-and long-term water supply demand forecast and financial forecast necessary for water supply facility development and expansion and its monitoring system are not yet institutionalized in Ministry of Public Works and Transport (MPWT), a supervisory authority, resulting most of WSSEs do not have mid- and long-term plan. To address it, setting MPWT as a main counterpart and Vientiane Capital WSSE, Luang Prabang Provincial WSSE and Khammouane Provincial WSSE as pilot WSSEs, Project MaWaSU strengthens management ability of water supply authorities through (1) Data management necessary for planning, (2) Long-, mid- and short-term planning/implementation, (3) Water supply operation monitoring, (4) Technical guidelines on water supply planning and (5) Dissemination mechanism on planning with the technical guidelines.

**3 Pilot Water Supply State Enterprise (WSSE)**



## Project MAWASU 2nd International Seminar (Cont.)

Theme and program is as follows:

Theme: Challenge for Creating Culture to Drink Tap Water by Supplying Drinkable Tap Water, Anytime Anywhere

Program:

1. Opening remarks (Ministry of Public Works and Transport, JICA Laos Office)
2. Congratulatory speech by guests of honor (Ministry of Health, Labour and Welfare, Saitama City Waterworks Bureau, Water works Bureau, City of Kawasaki)
3. General information of Project MaWaSU (Chief Advisor)
4. Challenge of Central Administration 1 (Department of Housing and Urban Planning)
5. Challenge of Central Administration 2 (Water Supply Regulatory Office)
6. Challenge of WSSE 1 (NPNL)
7. Challenge of WSSE 2 (LPB WSSE)
8. Challenge of WSSE 3 (KHM WSSE)
9. Open discussion
10. Closing remarks (Ministry of Public Works and Transport)

Looking into presentations a little more details, in General information of Project MaWaSU by Chief Advisor, Mr. Masahiro Shimomura, there were reports on (1) Case Study of MaWaSU to strengthen ability of water supply management and (2) Know-How of Project Management in Project MaWaSU.

DHUP (Department of Housing and Urban Planning) has regular study meeting to discuss (1) Drawing up Water Supply Vision, (2) Preparation of Lao Water Works Association and (3) PPP Guidelines. However, DHUP presented general information of water supply sector in Laos.

WASRO (Water Supply Regulatory Office) presented topics in the project activities such as (1) Confirmation of calculation methods of performance indicators (9KPI) according to the existing guidelines and its dissemination to the whole country and (2) Making (New) Water Supply Guidelines (Draft) and its report and preparation of Water Supply Statistics Yearbook.

Three pilot WSSEs had a preparatory meeting one month before for careful preparations to have some rehearsals in monthly and weekly meetings. While the JICA expert team provides the same support to the 3 pilot WSSEs, each WSSE preferred to present its activities separately because efforts and focus of each WSSE was different. In order for the participants to understand the MaWaSU activities, however, the 3 pilot WSSEs coordinated their presentations as follows:

NPNL (Vientiane Capital WSSE): Output 1 = Water Supply Annual Report, Data Management Manual, Report of PI (Performance Indicators) based on Water Supply Guidelines

Luang Prabang WSSE: Output 2 = Long-term Plan and Detailed plan by sector in Long-term Plan

Khammouane WSSE: Output 3 = Waterworks education class in Detailed plan by sector in Long-term Plan

## MaWaSU International Seminar seen by questionnaire

Results of questionnaire of Project MaWaSU 2nd International Seminar were as follows (questionnaire collected 106 out of 200 participants (response rate: 53%)):

For basic questions "How do you feel to attend this seminar?" and " Are you interested in the activities of Project MaWaSU?," all 106 people replied "Good" and "Yes." It is considered the overall purpose of the seminar is achieved.

For the question "What were the most interesting subjects for you in the seminar?," 71 people replied "Challenge of Central Administration 1 (DHUP), received the highest numbers of reply. While the MaWaSU expert team questioned why because it didn't report about the project, it is assumed that many participants upheld comprehensive information of water supply sector in Laos, in addition to the fact that the presenter was Mr. Noupheuak, Deputy Director General of DHUP who is very much known as one of the leading persons in water sector in Laos. It is hoped that DHUP will receive high evaluation by presenting activities of MaWaSU next time.



Mr. Noupheuak, DDG of DHUP, one of the leading persons in water sector in Laos.

Presentations by the 3 pilot WSSEs follow that of DHUP. It is considered that participants understood MaWaSU activities very much by well-organized presentations by the 3 pilot WSSEs.

There were more comments than expected for questions "What do you expect Project MaWaSU to support your province in water supply sector?," "What do you expect the Japanese government, JICA or Japanese companies to support your province in water supply sector?" and other comments. Most of the comments were related to water supply business and operation management of WSSE in both technical and administrative matters: technical matters such as NRW management, water leakage detection, water quality management, etc., while administration matters such as HRD, finance management, customer relations, etc. Some of the WSSEs specified their names to expect Project MaWaSU to support them. As a whole, requests dominated grant aid for construction of water treatment plant, technical cooperation such as Project MaWaSU, provision of equipment and training in Japan. It can be said that water sector in Laos has positively accepted ODA supports by Japan.



Mr. Khamthavy, DG of DHUP, referring "supply of drinkable tap water" in closing remarks

As special mention, there were many comments referring to drinking tap water such as "request for project

CONTINUED ON PAGE 3

# 4th Project to Project (P2P) Meeting

Project to Project (P2P) Meeting serves as a place for exchanging information and opinions among water supply utilities in South-East Asian countries. The first P2P Meeting was held among only JICA technical projects on water supply sector in Laos, Cambodia and Vietnam. Since the 3rd P2P Meeting in 2013, participants have discussed and exchanged information and opinions about the main theme of the P2P Meeting “Creating a culture to drink tap water in your country.”

Having the 4th P2P Meeting together with “Project MaWaSU 2nd International Seminar” (separate article in this issue), government officials and waterworks practitioners from Cambodia, Indonesia, Myanmar, Thailand and Laos joined the meeting this time.



Mr. Noupheuak, Chairperson of the 4th P2P Meeting

There are many ways of tackling the issue “Creating a culture to drink tap water in your country.” Lao representative reported its efforts on “Creating a culture to drink tap water in your country” through monitoring waterworks activities by the government and WSSEs by using the Water Supply Guidelines that consist of (1) Mission and purpose of waterworks, (2) Components and each activity of waterworks and (3) M&E of waterworks (Performance review) made through the project activity of MaWaSU.

Report from Cambodia was also approach from the government focusing on laws and regulations of water supply. No legislation on water supply has enacted yet in Cambodia. Government counterpart officials of JICA Water Supply Project in Cambodia therefore collected information of water supply law and its related regulations of the neighboring countries through the P2P Meeting.

Government officials of Indonesia and Myanmar who participated in P2P Meeting for the first time introduced general situations of water supply sector and efforts to drinkable tap water of each country. MWA (Metropolitan Waterworks Authority) and PWA (Provincial Waterworks Authority) of Thailand, also first time to join P2P Meeting, sent practitioners to report general waterworks operation, why Thai people do not drink tap water and efforts for letting customers drink tap water in detail.

The 4th P2P Meeting featured general information of each country and overall efforts for “Creating a culture to drink tap water in your country” because there were many countries to participate in the P2P Meeting for the first time. Therefore, following the contents of the previous declaration of MaWaSU 2013, Declaration of MaWaSU 2014 confirmed continuous efforts on (1) Provision of good water service to customers, (2) Implementation of Water Safety Plan, (3) Keeping clean office and water supply facilities and (4) Customer relations including customer education. It is expected that in-depth discussion on the above 4 issues will be made in the next P2P Meeting.



Informal talk, good feature of P2P Meeting

## MaWaSU Int’l Seminar seen by questionnaire (Cont.)

support to supply drinkable tap water in Laos.” In his closing remarks, Mr. Khamthavy Thaiphachanh, Director General of DHUP, stated that it is a goal to provide drinkable tap water anytime anywhere at adequate price in Laos. It is true that awareness of “water supply = supply of drinkable tap water” has been expanded through Project MaWaSU.

Ms. Chalinthorn of MWA (Metropolitan Waterworks Authority), Thailand commented to the presentation on waterworks education class by Khammouane WSSE that it is wonderful that elementary school students correctly understand waterworks and water quality and tell it to their parents and family at home.

In others, as expectations for the Japanese government and companies, there were opinions on developing a permanent soft loan (long-term, low-interest loan) system and investment for components factories in water supply sector.

## Picture space



Group photo of Project MaWaSU 2nd International Seminar



Mr. Takazawa of MHLW, Japan giving opening remarks at 2nd Laos-Japan Waterworks Seminar



Baci traditional ceremony for success of a series of seminars and meetings

*** We always welcome your feedback ***
MaWaSU Project Office
Email/Tel : jicapimawasa@gmail.com / (+856-21) 260493 Project website : http://www.jica.go.jp/project/english/laos/012/index.html

ຂ່າວພາຍໃນ
Internal Newsletter
ມິດຕະພາບ ລາວ - ຍີ່ປຸ່ນ
Friendship for Laos and Japan
No. 15- ທັນວາ 2014

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ກົມເຄຫາ ແລະ ຜັງເມືອງ
ໂຄງການ ພັດທະນາ ຄວາມອາດສາມາດ
ດ້ານການຄຸ້ມຄອງ ໃຫ້ແກ່ຂະແໜງນໍ້າປະປາ
The Capacity Development Project for Improvement of Management Ability of Water Supply Authorities

## ໂຄງການ MAWASU ໄດ້ຈັດກອງປະຊຸມສຳມະນາສາກົນຄັ້ງທີ 2 ແລະ ກອງປະຊຸມລະຫວ່າງໂຄງການ ຄັ້ງທີ 4

ໂຄງການ MAWASU ໄດ້ຈັດກອງປະຊຸມສຳມະນາສາກົນຂຶ້ນໃນວັນທີ 20 ພະຈິກ 2014, ມີຜູ້ເຂົ້າຮ່ວມປະມານ 200 ຄົນ ລວມທັງຜູ້ຕາງໜ້າຈາກ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ, ສຳນັກງານນໍ້າປະປາເມືອງໄຊຕະມະ, ສຳນັກງານນໍ້າປະປາເມືອງຄາວາຊະກິ ປະເທດຍີ່ປຸ່ນ, ອົງການທີ່ກ່ຽວຂ້ອງ, ແລະ ແຂກຈາກຕ່າງປະເທດ, ສາລະບານຂອງກອງປະຊຸມໂດຍຕົ້ນຕໍກໍ່ຄືບັນດາກິດຈະກຳຂອງໂຄງການໃນ 2 ປີ, ເຊິ່ງມີລາຍລະອຽດຫລາຍກວ່າປີກາຍທີ່ພຽງແຕ່ແນະນຳກ່ຽວກັບໂຄງການນີ້. ກອງປະຊຸມ ລະຫວ່າງໂຄງການ ຄັ້ງທີ 4 ແມ່ນໄດ້ຈັດຂຶ້ນໃນວັນທີ 21 ພະຈິກ 2014, ມີຜູ້ເຂົ້າຮ່ວມປະມານ 50 ຄົນ, ໃນກອງປະຊຸມໄດ້ມີການສົນທະນາກ່ຽວກັບ “ການສ້າງວັດທະນະທຳໃນການດື່ມນໍ້າຈາກກ໊ອກໃນປະເທດຂອງທ່ານ”.




## ກອງປະຊຸມສຳມະນາສາກົນຄັ້ງທີ 2 ໂຄງການ MAWASU

ໃນໄລຍະເວລາໂຄງການ (2012-2017), ກອງປະຊຸມສຳມະນາສາກົນ ແມ່ນຈະໄດ້ຈັດຂຶ້ນປີລະຄັ້ງ. ກອງປະຊຸມສຳມະນາສາກົນຄັ້ງທີ 2 ນີ້ ແມ່ນໄດ້ຈັດຂຶ້ນໃນວັນທີ 20 ພະຈິກ 2014 ທີ່ໂຮງແຮມ ລາວພລາຊາ ນະຄອນຫລວງວຽງຈັນ. ໂດຍມີຜູ້ຕາງໜ້າຈາກ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ, ສຳນັກງານນໍ້າປະປາເມືອງໄຊຕະມະ, ສຳນັກງານນໍ້າປະປາເມືອງຄາວາຊະກິ, ອົງການ JICA ສຳນັກງານໃຫຍ່ ຈາກປະເທດຍີ່ປຸ່ນໄດ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້, ຝ່າຍລາວກໍ່ມີຕາງໜ້າຈາກກົມຕ່າງໆຂອງກະຊວງ ຍທຂ (ຜູ້ຈັດງານ), ພະແນກ ຍທຂ ແຂວງທົ່ວປະເທດ ແລະລັດວິສາຫະກິດນໍ້າປະປາທົ່ວປະເທດເປັນຜູ້ເຂົ້າຮ່ວມຕາງໜ້າຝ່າຍລາວ.



ມີຜູ້ຕາງໜ້າຈາກປະເທດໃກ້ຄຽງເຊັ່ນ: ກຳປູເຈຍ, ອິນໂດເນເຊຍ, ມຽນມາ, ໄທ ແລະ ຫວຽດນາມ ໄດ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ໂດຍລວມທັງໝົດ 200 ຄົນ. ຈຸດປະສົງຂອງກອງປະຊຸມສຳມະນາສາກົນ ແມ່ນເພື່ອຕ້ອງການແບ່ງປັນຂໍ້ມູນກ່ຽວກັບກິດຈະກຳຂອງໂຄງການ MAWASU ໃຫ້ແກ່ໜ່ວຍງານທີ່ກ່ຽວຂ້ອງ ໃນຂະແໜງນໍ້າປະປາທັງພາຍໃນ ແລະ ຕ່າງປະເທດ ເພື່ອເປັນການແລກປ່ຽນຂໍ້ມູນ ແລະ ຄວາມຄິດເຫັນ. ກອງປະຊຸມສຳມະນາຄັ້ງທີ 2 ນີ້ ແມ່ນໄດ້ກະກຽມໂອກາດ ໃຫ້ແກ່ສະມາຊິກໂຄງການ MAWASU ໃນການນຳສະເໜີກິດຈຳໂຄງການ ແລະ ໝາກຜົນທີ່ໄດ້ຮັບໃນ 2 ປີ ເຊິ່ງຕ່າງຈາກປີຜ່ານມາທີ່ມີພຽງຂໍ້ມູນທົ່ວໄປຂອງໂຄງການເທົ່ານັ້ນ. ໂດຍສະເພາະ 3 ລັດວິສາຫະກິດນໍ້າປະປາຕົວແບບທີ່ໄດ້ມີຄວາມພະຍາຍາມເຂົ້າໃສ່ໂຄງການ MAWASU. 3 ລັດວິສາຫະກິດນໍ້າປະປາຕົວແບບໄດ້ແບ່ງກັນຮັບຜິດຊອບບົດລາຍງານ ເພື່ອໃຫ້ແຂກທີ່ເຂົ້າຮ່ວມກອງປະຊຸມຮັບຟັງ ແລະ ຕໍ່ໜ້າ 2

ໂຄງການພັດທະນາຄວາມອາດສາມາດ ດ້ານການຄຸ້ມຄອງໃຫ້ແກ່ຂະແໜງນໍ້າປະປາ (ຄຄນປປ)

ອີງຕາມດຳລັດນາຍົກລັດຖະມົນຕີ ປີ 1999, ແມ່ນໄດ້ຕັ້ງເປົ້າໝາຍສູ້ຊົນເພື່ອໃຫ້ໄດ້ຊົມ ໃຊ້ນໍ້າປະປາທີ່ສະອາດ ແລະ ປອດໄພ ໃຫ້ໄດ້ຕະຫລອດ 24 ຊົ່ວໂມງ ກວມເອົາ 80% ຂອງປະຊາກອນພື້ນທີ່ຕົວເມືອງ ພາຍໃນປີ 2020. ໃນຂະນະທີ່ບັນດາອົງກອນພັດທະນາ ເຊິ່ງກໍ່ລວມທັງອົງການ JICA ໄດ້ໃຫ້ການຊ່ວຍເຫລືອຫລາຍດ້ານ, ພື້ນທີ່ຕົວເມືອງປົກຄຸມນໍ້າປະປາໃນປີ 2010 ມີພຽງແຕ່ 55%. ເພື່ອໃຫ້ບັນລຸເປົ້າໝາຍນັ້ນ, ແມ່ນມີຄວາມຈຳເປັນໃນການສືບຕໍ່ພັດທະນາ ແລະ ຂະຫຍາຍສິ່ງເອື້ອອຳນວຍລະບົບນໍ້າປະປາ ແລະ ການຈັດສັນງົບປະມານການລົງທຶນທີ່ປອດໄພ ໂດຍຜ່ານການຄຸ້ມຄອງວຽກງານນໍ້າປະປາທີ່ມີປະສິດທິພາບ. ສຳລັບການຄຸ້ມຄອງວຽກງານນໍ້າປະປາທີ່ມີປະສິດທິພາບ, ການວາງແຜນໄລຍະສັ້ນ ແລະ ການຕິດຕາມໜ້າວຽກ ແມ່ນໄດ້ມີການຈັດຕັ້ງມາເປັນໄລຍະໜຶ່ງແລ້ວ. ແຕ່ເຖິງຢ່າງໃດກໍ່ຕາມ, ບັນດາລັດວິສາຫະກິດນໍ້າປະປາກໍ່ຍັງບໍ່ສາມາດສ້າງແຜນໄລຍະສັ້ນ ແລະ ສືບຕໍ່ໄດ້ດ້ວຍຕົນເອງ ເຮັດໃຫ້ຜົນຂອງໜ້າວຽກໄດ້ປະສິດທິພາບຫລຸດລົງ. ຂັ້ນຕອນການສ້າງແຜນການແມ່ນອີງຕາມແຜນໄລຍະກາງ ແລະ ແຜນໄລຍະຍາວຂອງການຄາດຄະເນຄວາມຕ້ອງການນໍ້າ ແລະ ການຄາດຄະເນທາງດ້ານການເງິນ ກໍ່ເປັນສິ່ງຈຳເປັນຕໍ່ການພັດທະນາສິ່ງອຳນວຍຄວາມສະດວກ ແລະ ການຂະຫຍາຍນໍ້າປະປາ, ລະບົບການຕິດຕາມຢູ່ພາຍໃຕ້ກະຊວງໂຍທະທິການ ແລະ ຂົນສົ່ງ, ໜ່ວຍງານຄວບຄຸມ, ສະຫລຸບແລ້ວ ບັນດາລັດວິສາຫະກິດນໍ້າປະປາ ແມ່ນບໍ່ມີແຜນໄລຍະກາງ ແລະ ໄລຍະຍາວ. ເພື່ອທີ່ຈະເຮັດໄດ້ເຊັ່ນນັ້ນ, ຈຶ່ງໄດ້ໃຫ້ກະຊວງ ຍທຂ ເປັນຄູ່ຮ່ວມງານຫລັກ ແລະ ໃຫ້ລັດວິສາຫະກິດນໍ້າປະປານະຄອນຫລວງ, ລັດວິສາຫະກິດນໍ້າປະປາຫລວງພະບາງ ແລະ ລັດວິສາຫະກິດນໍ້າປະປາຄຳມ່ວນ ເປັນລັດວິສາຫະກິດນໍ້າປະປາຕົວແບບ, ໂຄງການ ຄຄນປປ ເສີມສ້າງຄວາມອາດສາມາດດ້ານການຄຸ້ມຄອງ ໃຫ້ແກ່ຂະແໜງການນໍ້າປະປາ ໂດຍຜ່ານ (1) ການຄຸ້ມຄອງຂໍ້ມູນທີ່ຈຳເປັນສຳລັບການວາງແຜນ, (2) ການວາງແຜນໄລຍະກາງ-ແຜນໄລຍະສັ້ນ ແລະ ແຜນໄລຍະຍາວ / ການດຳເນີນການ, (3) ການຕິດຕາມການດຳເນີນງານນໍ້າປະປາ, (4) ບົດແນະນຳດ້ານເຕັກນິກໃນການວາງແຜນນໍ້າປະປາ ແລະ (5) ກົນໄກການເຜີຍແຜ່ກ່ຽວກັບແຜນການພ້ອມທັງບົດຂື້ນຳທາງດ້ານເຕັກນິກ.

### 3 Pilot Water Supply State Enterprise (WSSE)



## ກອງປະຊຸມສຳມະນາສາກົນຄັ້ງທີ 2 ໂຄງການ MAWASU (ຕໍ່)

ເຂົ້າໃຈກ່ຽວກັບກິດຈະກຳໂຄງການ MAWASU ທີ່ໄດ້ຈັດຕັ້ງປະຕິບັດຜ່ານມາໂດຍລວມ.

ຫົວຂໍ້ ແລະ ລາຍການກອງປະຊຸມແມ່ນມີດັ່ງລຸ່ມນີ້:

ຫົວຂໍ້ກອງປະຊຸມ: ສິ່ງທ້າທາຍໃນການສ້າງວັດທະນະທຳດື່ມນ້ຳປະປາຈາກກ໊ອກໄດ້ ທຸກທີ່, ທຸກເວລາ.

ລາຍການກອງປະຊຸມ:

1. ກ່າວເປີດກອງປະຊຸມ (ກະຊວງ ໂຍທາທິການ ແລະ ຂົນສົ່ງ, ຫ້ອງການ JICA ປະຈຳ ສປປ ລາວ)
2. ກ່າວຄຳຍິນດີໂດຍແຂກກິດຕິມະສັກ (ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ, ສຳນັກງານນ້ຳປະປາເມືອງໄຊຕະມະ, ສຳນັກງານນ້ຳປະປາເມືອງຄາວາຊະກິ)
3. ຂໍ້ມູນທົ່ວໄປກ່ຽວກັບໂຄງການ MAWASU (ຫົວໜ້າທີ່ປຶກສາປະຈຳໂຄງການ)
4. ສິ່ງທ້າທາຍ ການຄຸ້ມຄອງຂັ້ນສູນກາງ 1 (ກົມເຄຫາ ແລະ ຜັງເມືອງ)
5. ສິ່ງທ້າທາຍ ການຄຸ້ມຄອງຂັ້ນສູນກາງ 2 (ຫ້ອງການດັດສົມນ້ຳປະປາ)
6. ສິ່ງທ້າທາຍ ລັດວິສາຫະກິດນ້ຳປະປາ 1 (ລັດວິສາຫະກິດນ້ຳປະປານະຄອນຫລວງ)
7. ສິ່ງທ້າທາຍ ລັດວິສາຫະກິດນ້ຳປະປາ 2 (ລັດວິສາຫະກິດນ້ຳປະປາແຂວງຫລວງພະບາງ)
8. ສິ່ງທ້າທາຍ ລັດວິສາຫະກິດນ້ຳປະປາ 3 (ລັດວິສາຫະກິດນ້ຳປະປາແຂວງຄຳມ່ວນ)
9. ສົນທະນາ
10. ກ່າວປິດກອງປະຊຸມ (ກະຊວງ ໂຍທາທິການ ແລະ ຂົນສົ່ງ)

ເມື່ອເບິ່ງໄປຍັງລາຍລະອຽດຂອງບົດສະເໜີ ໂດຍ ທ່ານ ມາຊາຣິໂລະ ຊິໂມມຸລະ, ໃນພາກຂໍ້ມູນທົ່ວໄປຂອງໂຄງການ MAWASU, ໄດ້ມີການລາຍງານ (1) ກຳລະນີສຶກສາ ຂອງ ໂຄງການ MAWASU ເພື່ອເສີມຂະຫຍາຍຄວາມອາດສາມາດໃນການຄຸ້ມຄອງນ້ຳປະປາ ແລະ (2) ວິທີການຄຸ້ມຄອງໂຄງການ ໃນໂຄງການ MAWASU.

ກົມເຄຫາ ແລະ ຜັງເມືອງ ແມ່ນມີກອງປະຊຸມປົກກະຕິເພື່ອຄົ້ນຄວ້າກ່ຽວກັບ: (1) ການສົ່ງເສີມວິໄສທັດນ້ຳປະປາ, (2) ການກະກຽມສ້າງຕັ້ງສະມາຄົມນ້ຳປະປາລາວ ແລະ (3) ບົດແນະນຳ PPP. ເຖິງຢ່າງໃດກໍ່ຕາມ, ກົມເຄຫາ ແລະ ຜັງເມືອງ ກໍ່ໄດ້ນຳສະເໜີບົດກ່ຽວກັບຂໍ້ມູນທົ່ວໄປຂອງຂະແໜງການນ້ຳປະປາໃນ ສປປ ລາວ.

ຫ້ອງການດັດສົມນ້ຳປະປາ ແມ່ນໄດ້ນຳສະເໜີຫົວຂໍ້ໃນການປະຕິບັດກິດຈະກຳໂຄງການ ເຊັ່ນ (1) ການຢືນຢັນວິທີການຄິດໄລ່ຕົວຊີ້ວັດ (9KPI) ອີງຕາມບົດແນະນຳທີ່ມີຢູ່ ແລະ ການເຜີຍແຜ່ໄປທົ່ວປະເທດ ແລະ (2) ການສ້າງບົດແນະນຳວຽກ ງານນ້ຳປະປາ ສະບັບຮ່າງ (ສະບັບໃໝ່) ແລະ ບົດລາຍງານ ແລະ ກະກຽມການສ້າງປື້ມສະຖິຕິນ້ຳປະປາ.

ສາມລັດວິສາຫະກິດນ້ຳປະປາຕົວແບບໄດ້ມີການກະກຽມໃນກອງປະຊຸມປະຈຳເດືອນ ແລະ ປະຈຳອາທິດ ກ່ອນໜຶ່ງເດືອນ ເພື່ອກະກຽມ ແລະ ຝຶກຊ້ອມການຂຶ້ນລາຍງານ. ໃນຂະນະທີ່ທີມງານຊ່ຽວຊານ JICA ກໍ່ໄດ້ກຽມການຊ່ວຍເຫລືອໃຫ້ແກ່ 3 ລັດວິສາຫະກິດຕົວແບບ, ລັດວິສາຫະກິດນ້ຳປະປາຕົວແບບໄດ້ແບ່ງກັນລາຍງານກ່ຽວກັບກິດຈະກຳໂຄງການໃນໄລຍະຜ່ານມາ ເຊິ່ງມີດັ່ງຫົວຂໍ້ລຸ່ມນີ້:

ລັດວິສາຫະກິດນ້ຳປະປານະຄອນຫລວງ: Output 1 = ບົດລາຍງານປະຈຳປີ, ຄູ່ມືການຄຸ້ມຄອງຂໍ້ມູນ, ບົດລາຍງານຕົວຊີ້ວັດທີ່ອີງຕາມບົດແນະນຳວຽກງານນ້ຳປະປາ.

ລັດວິສາຫະກິດນ້ຳປະປາແຂວງຫລວງພະບາງ: Output 2 = ແຜນໄລຍະຍາວ ແລະ ລາຍລະອຽດຂອງແຜນການ.

ລັດວິສາຫະກິດນ້ຳປະປາແຂວງຄຳມ່ວນ: Output 3 = ກິດຈະກຳຫ້ອງຮຽນນ້ຳປະປາ ໃນແຜນລະອຽດຕາມແຜນໄລຍະຍາວ.

## ການຕອບແບບສອບຖາມໃນກອງປະຊຸມສຳມະນາສາກົນ

ຜົນຂອງແບບສອບຖາມ ກອງປະຊຸມສຳມະນາສາກົນຄັ້ງທີ 2 ໂຄງການ MAWASU ແມ່ນມີດັ່ງລຸ່ມນີ້: (ແບບສອບຖາມເກັບກຳໄດ້ 106 ຊຸດ ຈາກທັງໝົດ 200 ຜູ້ເຂົ້າຮ່ວມ, ຫລືເທົ່າກັບ 53%):

ສຳລັບຄຳຖາມພື້ນຖານ "ທ່ານຮູ້ສຶກແນວໃດທີ່ໄດ້ເຂົ້າຮ່ວມກອງປະຊຸມສຳມະນາຄັ້ງນີ້?" ແລະ "ທ່ານໃຫ້ຄວາມສົນໃຈໃນກິດຈະກຳຂອງໂຄງການ MAWASU ບໍ?", ມີທັງໝົດ 106 ທີ່ຕອບ "ດີ" ແລະ "ແມ່ນ".

ສຳລັບຄຳຖາມ "ຫົວຂໍ້ໃດທີ່ໜ້າສົນໃຈທີ່ສຸດໃນ ກອງປະຊຸມສຳລັບທ່ານ?" 71 ຄົນຕອບ "ສິ່ງທ້າທາຍ ການຄຸ້ມຄອງຂັ້ນສູນກາງ 1 (ກົມເຄຫາ ແລະ ຜັງເມືອງ), ແມ່ນໄດ້ຮັບຄຳຕອບທີ່ຫລາຍສຸດ. ໃນຂະນະທີ່ທີມງານຊ່ຽວຊານຍີ່ປຸ່ນມີຄຳຖາມວ່າເປັນຫຍັງການນຳສະ ເໜີຈຶ່ງບໍ່ໄດ້ລາຍງານກ່ຽວກັບໂຄງການ, ເຊິ່ງກໍ່ອາດຈະເປັນຍ້ອນວ່າ ຜູ້ເຂົ້າຮ່ວມຈຳນວນຫລາຍທີ່ໄດ້ຮັບການຊ່ວຍເຫລືອດ້ານຂໍ້ມູນທີ່ ກວ້າງຂວາງ ຂອງຂະແໜງການນ້ຳປະປາໃນ ສປປ ລາວ, ອີກຢ່າງໜຶ່ງກໍ່ຄື ຜູ້ທີ່ຂຶ້ນບັນຍາຍ ແມ່ນທ່ານ ໝູເຜືອກ ວິລະບຸດ ຮອງຫົວໜ້າກົມເຄຫາ ແລະ ຜັງເມືອງ ເຊິ່ງເປັນຜູ້ໜຶ່ງທີ່ນຳພາທາງດ້ານຂະແໜງການນ້ຳປະປາໃນສປປ ລາວ. ເຊິ່ງກໍ່ຫວັງວ່າ ກົມເຄຫາ ແລະ ຜັງເມືອງ ຈະໄດ້ຮັບການຕີລາຄາສູງຈາກການນຳສະເໜີກ່ຽວກັບກິດຈະກຳຂອງໂຄງການ MAWASU ໃນຄັ້ງໜ້າ.


ທ່ານ ໝູເຜືອກ ວິລະບຸດ,
ຮອງຫົວໜ້າກົມເຄຫາ ແລະ ຜັງເມືອງ
ຂຶ້ນກ່າວໃນທີ່ປະຊຸມ

ຕໍ່ມາ ກໍແມ່ນການຂຶ້ນສະເໜີໂດຍ 3 ລັດວິສາຫະກິດນ້ຳປະປາຕົວແບບ. ຜູ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ສາມາດເຂົ້າໃຈກ່ຽວກັບກິດຈະກຳໂຄງການ MAWASU ໄດ້ດີ ຈາກການຈັດຕັ້ງການຂຶ້ນສະເໜີໂດຍ 3 ລັດວິສາຫະກິດນ້ຳປະປາຕົວແບບ.

ມີຄຳຄິດເຫັນ ຫລາຍກ່ວາຄຳຖາມທີ່ໄດ້ຄາດການໄວ້ "ທ່ານຄາດຫວັງໃຫ້ໂຄງການ MAWASU ຊ່ວຍເຫລືອແຂວງຂອງທ່ານໃນຂະແໜງນ້ຳປະປາບໍ?", "ທ່ານຄາດຫວັງໃຫ້ລັດຖະບານຍີ່ປຸ່ນ, ອົງການ JICA ຫລືບໍລິສັດຍີ່ປຸ່ນ ເພື່ອມາຊ່ວຍເຫລືອແຂວງຂອງທ່ານໃນຂະແໜງນ້ຳ ປະປາບໍ?", ແລະ ຄຳເຫັນອື່ນໆ. ຄຳເຫັນສ່ວນຫລາຍແມ່ນພົວພັນກັບທຸລະກິດນ້ຳປະປາ ແລະ ການຄຸ້ມຄອງການປະຕິບັດການໃນລັດວິສາຫະກິດນ້ຳປະປາ ທັງດ້ານເຕັກນິກ ແລະ ການບໍລິຫານ: ດ້ານເຕັກນິກເຊັ່ນ ການຄຸ້ມຄອງນ້ຳບໍ່ສ້າງລາຍຮັບ, ການປ້ອງກັນນ້ຳຮົ່ວ, ການຄຸ້ມຄອງຄຸນນະພາບນ້ຳ, ແລະ ອື່ນໆ, ດ້ານການບໍລິຫານ ເຊັ່ນ: ການພັດທະນາບຸກຄະລາກອນ, ການບໍລິຫານການເງິນ, ການພົວພັນລູກຄ້າ, ແລະ ອື່ນໆ. ມີລັດວິສາຫະກິດນ້ຳປະປາແຂວງຈຳນວນໜຶ່ງໄດ້ລະບຸຊື່ຂອງຕົນເພື່ອໃຫ້ທາງໂຄງການຊ່ວຍ ເຫລືອ, ໂດຍລວມແລ້ວແມ່ນ ການຂໍທຶນຊ່ວຍເຫລືອລ້າສຳລັບການກໍ່ສ້າງໂຮງງານຜະລິດນ້ຳປະປາ, ການຂໍທຶນຊ່ວຍເຫລືອດ້ານການຮ່ວມມືທາງເຕັກນິກໃນລັກສະນະຄ້າຍຄືກັບໂຄງການ MAWASU, ການຊ່ວຍເຫລືອດ້ານອຸປະກອນເຄື່ອງມື ແລະ ການຝຶກອົບຮົມທີ່ປະເທດຍີ່ປຸ່ນ. ສາມາດເວົ້າໄດ້ວ່າຂະແໜງການນ້ຳປະປາໃນສປປລາວ ມີທັດສະນະຄະຕິທີ່ດີໃນການຮັບເອົາການຊ່ວຍເຫລືອດ້ານການພັດທະນາ (ODA) ຈາກລັດຖະບານຍີ່ປຸ່ນ.



ທ່ານ ຄຳທະວີ ໄທພະຈັນ,
ຫົວໜ້າກົມເຄຫາ ແລະ ຜັງເມືອງ
ຂຶ້ນກ່າວໃນທີ່ປະຊຸມ

ດັ່ງທີ່ໄດ້ກ່າວມາ, ກໍ່ມີຫລາຍຄຳເຫັນກ່ຽວກັບນ້ຳປະປາດື່ມໄດ້ຈາກກ໊ອກ ເຊັ່ນ: ຂໍໃຫ້ໂຄງການຊ່ວຍເຫລືອໃຫ້ສາມາດມີນ້ຳປະປາດື່ມໄດ້ຈາກກ໊ອກ ຢູ່ໃນ ສປປ ລາວ. ໃນວາລະກ່າວປິດກອງປະຊຸມ ທ່ານ ຄຳທະວີ ໄທພະຈັນ ຫົວໜ້າກົມເຄຫາ ແລະ ຜັງເມືອງ

ຕໍ່ໜ້າ 3

## ກອງປະຊຸມລະຫວ່າງໂຄງການ ຄັ້ງທີ 4

ແມ່ນກອງປະຊຸມແລກປ່ຽນຂໍ້ມູນ ແລະ ຄໍາຄິດເຫັນລະ ຫວ່າງ ຂະແໜງການນໍ້າປະປາໃນບັນດາປະເທດຕາເວັນອອກສຽງໃຕ້. ກອງປະຊຸມລະຫວ່າງໂຄງການ ຄັ້ງທີ 1 ແມ່ນ ໄດ້ຈັດຂຶ້ນລະຫວ່າງ ໂຄງການດ້ານເຕັກນິກຂອງ JICA ສໍາລັບຂະແໜງການນໍ້າປະປາ ໃນສປປ ລາວ, ກໍາປູເຈຍ ແລະ ຫວຽດນາມ. ນັບແຕ່ກອງປະຊຸມລະຫວ່າງໂຄງການ ຄັ້ງທີ3 ໃນປີ 2013 ຜູ້ເຂົ້າຮ່ວມໄດ້ສົນທະນາ ແລະ ແລກປ່ຽນຂໍ້ມູນ ແລະ ຄໍາຄິດເຫັນກ່ຽວກັບຫົວຂໍ້ "ການສ້າງວັດທະນະທໍາ ໃນການດື່ມນໍ້າຈາກກ໊ອກ ໃນປະເທດຂອງທ່ານ".

ກອງປະຊຸມລະຫວ່າງໂຄງການຄັ້ງທີ 4 ນີ້ ແມ່ນໄດ້ຈັດຂຶ້ນຕໍ່ຈາກກອງປະຊຸມສໍາມະນາສາກົນຂອງໂຄງການໃນມື້ຕໍ່ມາ, ເຂົ້າຮ່ວມຈາກວິຊາການຝ່າຍລັດ ແລະ ວິຊາການນໍ້າປະປາຈາກປະເທດກໍາປູເຈຍ, ອິນໂດເນເຊຍ, ມຽນມາ, ໄທ ແລະ ສປປ ລາວ.



ທ່ານ ໜູເພືອກ ວິລະບຸດ, ເປັນປະທານກອງປະຊຸມລະຫວ່າງໂຄງການຄັ້ງທີ 4

ຕາງໜ້າຈາກຝ່າຍລາວໄດ້ຂຶ້ນລາຍງານຕໍ່ກັບຄວາມຕັ້ງໜ້າໃນການ "ສ້າງວັດທະນະທໍາ ໃນການດື່ມນໍ້າຈາກກ໊ອກ ໃນປະເທດຂອງທ່ານ" ໂດຍຜ່ານການຕິດຕາມກິດຈະກໍາວຽກງານນໍ້າປະປາຈາກລັດຖະບານ ແລະ ລັດວິສາຫະກິດນໍ້າປະປາ ໂດຍນໍາໃຊ້ບົດແນະນໍາດ້ານວຽກງານນໍ້າປະປາ ທີ່ປະກອບມີ (1) ພາລະກິດ ແລະ ຈຸດປະສົງ ຂອງວຽກງານນໍ້າປະປາ, (2) ອົງປະກອບ ແລະ ແຕລະກິດຈະກໍາຂອງວຽກງານນໍ້າປະປາ ແລະ (3) ການບໍາລຸງຮັກສາ ແລະ ການຕີລາຄາ ວຽກງານນໍ້າປະປາ (ທົບທວນການປະຕິບັດງານ) ແມ່ນໄດ້ຈັດຕັ້ງປະຕິບັດໂດຍຜ່ານກິດຈະກໍາໂຄງການ MAWASU.

ການລາຍງານຈາກປະເທດກໍາປູເຈຍແມ່ນແນໃສ່ດ້ານກົດໝາຍ ແລະ ລະບຽບການ ຂອງນໍ້າປະປາ. ເນື່ອງຈາກປະເທດກໍາປູເຈຍຍັງບໍ່ມີກົດໝາຍນໍ້າປະປາ, ຄູ່ຮ່ວມງານຝ່າຍລັດ ຂອງໂຄງການນໍ້າປະປາ ອົງການ JICA ປະຈໍາປະເທດກໍາປູເຈຍ ຈຶ່ງໄດ້ເກັບກໍາຂໍ້ມູນຂອງກົດໝາຍນໍ້າປະປາ ແລະ ລະບຽບການທີ່ກ່ຽວຂ້ອງຈາກບັນດາປະເທດໃກ້ຄຽງໂດຍຜ່ານ ກອງປະຊຸມຄັ້ງນີ້.

ນັກວິຊາການຝ່າຍລັດຈາກປະເທດອິນໂດເນເຊຍ ແລະ ມຽນມາ ທີ່ໄດ້ເຂົ້າຮ່ວມກອງປະຊຸມລະຫວ່າງໂຄງການໃນຄັ້ງທີໜຶ່ງ ໄດ້ແນະນໍາກ່ຽວກັບສະພາບທົ່ວໄປ ຂອງຂະແໜງນໍ້າປະປາ ແລະ ສົ່ງເສີມນໍ້າປະປາດື່ມໄດ້ຈາກກ໊ອກໃນແຕ່ລະປະເທດ. ການປະປານະຄອນຫລວງ ແລະ ການປະປາສ່ວນພູມິພາກ ຂອງປະເທດໄທ ແມ່ນໄດ້ເຂົ້າຮ່ວມກອງປະຊຸມນີ້ເປັນຄັ້ງທໍາອິດ ເຊິ່ງໄດ້ສົ່ງພະນັກງານວິຊາການ ເພື່ອມາລາຍງານກ່ຽວກັບການປະຕິບັດການນໍ້າປະປາ, ເປັນຫຍັງຄົນໄທຈຶ່ງບໍ່ກ້າດື່ມນໍ້າຈາກກ໊ອກ ແລະ ການສົ່ງເສີມເພື່ອໃຫ້ລູກຄ້າດື່ມນໍ້າຈາກກ໊ອກ.

ກອງປະຊຸມລະຫວ່າງໂຄງການຄັ້ງທີ 4 ແມ່ນເຮັດໃຫ້ເຫັນເຖິງຂໍ້ມູນໂດຍທົ່ວໄປ ຂອງແຕລະປະເທດ ແລະ ການສົ່ງເສີມໂດຍລວມໃນການ ສ້າງວັດທະນະທໍາການດື່ມນໍ້າຈາກກ໊ອກໃນປະເທດຂອງທ່ານ. ເພາະວ່າມີຫລາຍປະເທດທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ເປັນຄັ້ງທໍາອິດ ດັ່ງນັ້ນ, ຕາມການແຈ້ງການຂອງໂຄງການ MAWASU ປະຈໍາປີ 2013, ແຈ້ງການຂອງໂຄງການ MAWASU ປະຈໍາປີ 2014 ໄດ້ຢືນຢັນໃນການສືບຕໍ່ສົ່ງເສີມຄື: (1) ການກະກຽມໃຫ້ບໍລິການນໍ້າທີ່ດີແກ່ລູກຄ້າ, (2) ດໍາເນີນການແຜນນໍ້າປະປາປອດໄພ, (3) ຮັກສາສະຖານທີ່ຫ້ອງການ ແລະ ສົ່ງອໍານວຍຄວາມສະດວກນໍ້າປະປາ ແລະ (4) ການພົວພັນລູກຄ້າ ລວມເຖິງການໃຫ້ຄວາມຮູ້ກ່ຽວກັບນໍ້າປະປາແກ່ລູກຄ້າ.

ແລະກໍ່ຄາດຫວັງວ່າການສົນທະນາທີ່ເລິກເຊິ່ງ ໃນ 4 ຫົວຂໍ້ຂ້າງເທິງນີ້ຈະມີຂຶ້ນໃນກອງປະຊຸມລະຫວ່າງໂຄງການຄັ້ງຕໍ່ໄປ.



ການສົນທະນາແລກປ່ຽນ ໃນກອງປະຊຸມລະຫວ່າງໂຄງການ

## ການຕອບແບບສອບຖາມໃນກອງປະຊຸມສໍາມະນາສາກົນ (ຕໍ່)

ໄດ້ກ່າວວ່າ ມັນແມ່ນເປົ້າໝາຍເພື່ອທີ່ຈະກະກຽມນໍ້າປະປາທີ່ສາມາດດື່ມໄດ້ຈາກກ໊ອກ ທຸກທີ່ ທຸກເວລາ ແລະ ມີລາຄາທີ່ເໝາະສົມ ໃນສປປ ລາວ. ມັນແມ່ນຄວາມຈິງທີ່ທຸກຄົນຮັບຮູ້ວ່າ "ນໍ້າປະປາ = ການສະໜອງນໍ້າປະປາທີ່ສາມາດດື່ມໄດ້"

ທ່ານ ນ. ຂະລັ່ນທອນ ວິຊາການຈາກ ການປະປານະຄອນຫລວງ ປະເທດໄທ, ໄດ້ປະກອບຄໍາເຫັນກ່ຽວກັບກິດຈະກໍາຫ້ອງຮຽນນໍ້າປະປາວ່າເປັນສິ່ງທີ່ດີຫລາຍທີ່ນັກຮຽນຊັ້ນປະຖົມສາມາດເຂົ້າໃຈກ່ຽວກັບນໍ້າປະປາ ແລະ ຄຸນນະພາບນໍ້າ ເພື່ອທີ່ຈະນໍາໄປບອກເລົ່າຕໍ່ຄອບຄົວ.

ນອກຈາກນີ້, ຄວາມຄາດຫວັງຈາກລັດຖະບານຍີ່ປຸ່ນ ແລະ ບໍລິສັດເອກະຊົນ, ກໍ່ມີຄໍາເຫັນໃນການພັດທະນາທາງດ້ານລະບົບເງິນກູ້ (ເງິນກູ້ໄລຍະຍາວ, ເງິນກູ້ດອກເບ້ຍຕໍ່າ) ແລະ ການລົງທຶນສໍາລັບສ້າງຕັ້ງໂຮງຈັກໂຮງງານຜະລິດວັດຖຸອຸປະກອນກ່ຽວກັບນໍ້າປະປາ.

## ຮູບພາບ



ຖ່າຍຮູບລວມ ຄະນະນໍາ ກອງປະຊຸມສໍາມະນາສາກົນ ຄັ້ງທີ 2 ໂຄງການ MAWASU



Mr. Takazawa ຕາງໜ້າຈາກກະຊວງສາທາລະນະສຸກ,ແຮງງານ ແລະ ສະຫວັດດີການ ປະເທດຍີ່ປຸ່ນ, ຂຶ້ນກ່າວເປີດ ກອງປະຊຸມສໍາມະນາວຽກງານນໍ້າປະປາ ລາວ-ຍີ່ປຸ່ນ ຄັ້ງທີ 2



ພິທີບາສີສູ່ຂວັນເພື່ອຕ້ອນຮັບແຂກທີ່ມາເຂົ້າຮ່ວມກອງປະຊຸມ